

# ການຖ່າຍທອດສົດການທາລຸນທາງເພດເດັກທາງອິນເຕີເນັດ

ນິຍາມ

## ການຖ່າຍທອດສົດການທາລຸນທາງເພດເດັກທາງອິນເຕີເນັດ

ການທາລຸນແບບຖ່າຍທອດສົດຜ່ານທາງກ້ອງວິດີໂອທີ່ຕໍ່ກັບອິນເຕີເນັດ ຫຼື ເວັບແຄມເກີດຂຶ້ນ ເມື່ອເດັກຖືກບັງຄັບໃຫ້ປະກົດຕົວຢູ່ໜ້າກ້ອງວິດີໂອທີ່ຕໍ່ກັບອິນເຕີເນັດ ເພື່ອມີສ່ວນຮ່ວມໃນພຶດຕິກຳທາງເພດ ຫຼື ເພື່ອເປົ້າໝາຍທາລຸນທາງເພດ.

ການກະທຳດັ່ງກ່າວຈະຖືກຖ່າຍທອດສົດຜ່ານທາງອິນເຕີເນັດສຳລັບລູກຄ້າທີ່ຊຳລະເງິນເຂົ້າເບິ່ງ - ຜູ້ລະເມີດ - ທີ່ເບິ່ງ ແລະ/ຫຼື ຂໍກະທຳການທາລຸນປະເພດໃດໜຶ່ງສະເພາະຜ່ານທາງກ້ອງວິດີໂອທີ່ຕໍ່ກັບອິນເຕີເນັດໃນເວລາຕົວຈິງ.



## ຂອບກົດໝາຍ

ລະບຽບກົດໝາຍພາກພື້ນ ຫຼື ສາກົນກ່ຽວກັບການຂູດຮີດທາງເພດເດັກບໍ່ໄດ້ກຳນົດຢ່າງຈະແຈ້ງວ່າການຖ່າຍທອດສົດການຂູດຮີດທາງເພດໂດຍຜ່ານກ້ອງວິດີໂອທີ່ຕໍ່ກັບອິນເຕີເນັດເປັນການກະທຳຜິດທາງອາຍາ.

ເຖິງຢ່າງໃດກໍ່ຕາມ, ສົນທິສັນຍາລານຊາໂຣດ໌ໄດ້ກຳນົດວ່າການກະທຳທີ່ສົ່ງຜົນກະທົບບໍ່ດີຕໍ່ເດັກ ແລະ ການບັງຄັບເດັກໃຫ້ມີສ່ວນຮ່ວມໃນການກະທຳທີ່ລາມົກອະນາຈານເປັນການກະທຳຜິດທາງອາຍາ (ມາດຕາ 21(1)(ກ-ຂ)) ເຊັ່ນດຽວກັບການຮູ້ເຫັນວ່າເດັກມີສ່ວນຮ່ວມໃນການກະທຳທີ່ລາມົກອະນາຈານ (ຄ). ນອກຈາກນັ້ນ ສົນທິສັນຍາດັ່ງກ່າວຍັງໄດ້ກຳນົດວ່າການກະທຳທີ່ເປັນການຊ່ວຍ ຫຼື ຍຸຍົງສົ່ງເສີມການກະທຳເຫຼົ່ານີ້ ແມ່ນການກະທຳຜິດທາງອາຍາເຊັ່ນດຽວກັນ (ມາດຕາ 24) ເຊິ່ງມາດຕານີ້ຈະມີຜົນຕໍ່ບຸກຄົນທີ່ອຳນວຍຄວາມສະດວກ ຫຼື ຍຸຍົງສົ່ງເສີມໃຫ້ມີການກະທຳຜິດ.

ອີງຕາມມາດຕາ 3(1)(ກ) ອະນຸສັນຍາເພີ້ມເຕີມຂອງສົນທິສັນຍາວ່າດ້ວຍສິດທິເດັກກ່ຽວກັບ ການຄ້າເດັກ, ການຄ້າປະເວນີເດັກ ແລະ ສິ່ງລາມົກອານາຈານທີ່ກ່ຽວກັບເດັກໄດ້ກຳນົດວ່າການກະທຳທີ່ເປັນການສະເໜີ, ນຳສົ່ງ ຫຼື ຍອມຮັບເດັກເພື່ອຈຸດປະສົງຂູດຮີດທາງເພດດ້ວຍວິທີການໃດໆກໍ່ຕາມ ແມ່ນການກະທຳຜິດທາງອາຍາ.

ເຊັ່ນດຽວກັນກັບມາດຕາ 3 (ຂ) ສົນທິສັນຍາ ILO 182 ໄດ້ກຳນົດວ່າການນຳໃຊ້, ຈັດຫາ ຫຼື ສະເໜີເດັກເພື່ອຈຸດປະສົງ [...] ໃນການກະທຳລາມົກອະນາຈານ ເປັນການກະທຳຜິດທາງອາຍາ.

ບັນດາມາດຕາດັ່ງກ່າວຈະຖືກຕີຄວາມໝາຍເພື່ອກວມເອົາການກະທຳທີ່ກ່ຽວຂ້ອງກັບການຖ່າຍທອດສົດການທາລຸນທາງເພດໂດຍຜູ້ລະເມີດ ແລະ ຜູ້ອຳນວຍຄວາມສະດວກ.

ໂດຍລວມແລ້ວບັນດາສົນທິສັນຍາພາກພື້ນ ແລະ ສາກົນທີ່ກ່ຽວຂ້ອງກັບສິ່ງລາມົກອະນາຈານເດັກບໍ່ມີຜົນຕໍ່ບັນຫາການຖ່າຍທອດສົດການທາລຸນເດັກ ເພາະສ່ວນຫຼາຍແມ່ນບໍ່ມີການບັນທຶກການທາລຸນ ຫຼື ການກະທຳດັ່ງກ່າວ. ດັ່ງນັ້ນ, ຈຶ່ງບໍ່ມີ "ການສ້າງ, ຄອບຄອງ ຫຼື ເຜີຍແຜ່" ຕາມທີ່ໄດ້ກຳນົດພາຍໃຕ້ຂອບເຂດກົດໝາຍໃນປະຈຸບັນ.

## ຜູ້ລະເມີດ ແລະ ວິທີດຳເນີນການຂອງພວກເຂົາ

- ໂດຍທົ່ວໄປແລ້ວຜູ້ລະເມີດເບິ່ງການທາລຸນທາງເພດເດັກຜ່ານທາງກ້ອງວິດີໂອທີ່ຕໍ່ກັບອິນເຕີເນັດແມ່ນສາມາດເຂົ້າເຖິງສິ່ງດັ່ງກ່າວຜ່ານທາງ **ຄົນກາງ ຫຼື ຜູ້ອຳນວຍຄວາມສະດວກ;**
- ບາງຄັ້ງ ຜູ້ອຳນວຍຄວາມສະດວກແມ່ນຄອບຄົວ**ຂອງເດັກ** ຫຼື **ຄົນໃນຂອງຊຸມຊົນ**ທີ່ບັງຄັບໃຫ້ເດັກສະແດງທ່າທີດັ່ງກ່າວຕໍ່ໜ້າກ້ອງວິດີໂອທີ່ຕໍ່ກັບອິນເຕີເນັດ ແລະ ຕິດຕໍ່ສື່ສານກັບກຸ່ມເປົ້າໝາຍທີ່ຈະເປັນລູກຄ້າ;
- ຜູ້ລະເມີດ ແລະ ຜູ້ອຳນວຍຄວາມສະດວກ ຫຼື ເດັກ**ຕົກລົງເຫັນດີ**ກ່ຽວກັບ**ວັນ ແລະ ເວລາ**ທີ່ຈະດຳເນີນການດັ່ງກ່າວ ແລະ ຜູ້ລະເມີດຈະເລີ່ມເປີດຄອມພິວເຕີເພື່ອເຂົ້າໄປໃຊ້. ການນັດໝາຍດັ່ງກ່າວແມ່ນເກີດຂຶ້ນໂດຍຜ່ານຫ້ອງສົນທະນາ, ອີເມວ ຫຼື ໂທລະສັບ;
- ນອກຈາກນັ້ນແລ້ວ ຝ່າຍທີ່ມີສ່ວນຮ່ວມຈະ**ຕົກລົງເຫັນດີ**ກ່ຽວກັບ**ລາຄາ**ທີ່ຜູ້ລະເມີດຈະຈ່າຍ, ການຊຳລະແມ່ນດຳເນີນການໂດຍຜ່ານການບໍລິການຊຳລະຢ່າງຖືກຕ້ອງຕາມກົດໝາຍ. ໂດຍທົ່ວໄປແລ້ວ ຈຳນວນທີ່ຊຳລະຈະໜ້ອຍເພື່ອສະກັດກັ້ນຂໍ້ສົງໄສກ່ຽວກັບທຸລະກຳຕ່າງໆ;
- ແຕ່ລະຮູບການ ເປັນຕົ້ນແມ່ນຜ່ານທາງໂປຣແກຣມສະໄກປ໌ ຫຼື ເວັບໄຊຫ້ອງສົນທະນາທີ່ສາມາດໃຊ້ກ້ອງວິດີໂອທີ່ຕໍ່ກັບອິນເຕີເນັດ ແມ່ນຊ່ອງທາງທີ່ຖືກນຳໃຊ້**ໃນການຖ່າຍທອດສົດ**ການທາລຸນທາງເພດທາງອິນເຕີເນັດ. ເຊິ່ງສິ່ງດັ່ງກ່າວເຮັດໃຫ້ຜູ້ລະເມີດສາມາດ**ເບິ່ງ**ການທາລຸນທາງເພດໄດ້ໃນເວລາຈິງ ຫຼື **ສາມາດເຂົ້າເຖິງ**ສິ່ງດັ່ງກ່າວຜ່ານທາງຫ້ອງສົນທະນາ ຫຼື ຂໍ້ຄວາມສຽງ;
- ໃນບາງຊຸມຊົນ, ອາດຈະມີລະດັບ**ທີ່ສັງຄົມຍອມຮັບ** ເຊິ່ງພາໃຫ້ເກີດມີອາດຊະຍາກຳ. ສິ່ງນີ້ກ່ຽວຂ້ອງກັບບັນດາປັດໄຈຕ່າງໆ ເປັນຕົ້ນແມ່ນຄວາມທຸກຍາກ ແລະ ຂີດຈຳກັດທາງດ້ານຄວາມເຂົ້າໃຈກ່ຽວກັບອິນເຕີເນັດ, ຜົນກະທົບຕໍ່ເດັກ ຫຼື ເປັນການກະທຳທີ່ບໍ່ຖືກຕ້ອງດ້ານກົດໝາຍ. ການຖ່າຍທອດສົດການທາລຸນທາງເພດແມ່ນສິ່ງທີ່ສະໜອງແຫຼ່ງລາຍຮັບທີ່ງ່າຍດາຍ ແລະ ວ່ອງໄວໃຫ້ແກ່ຜູ້ລະເມີດ.

## ທ່ານສາມາດເຮັດຫຍັງໄດ້ແນ່?

- ຈົ່ງປູກຈິດສຳນຶກ ແລະ ເຮັດໃຫ້ຊຸມຊົນເຂົ້າໃຈກ່ຽວກັບການຖ່າຍທອດສົດການທາລຸນທາງເພດເດັກວ່າເປັນສິ່ງທີ່ຜິດກົດໝາຍ, ມີຜົນກະທົບທີ່ບໍ່ດີ ແລະ ຄວາມສ່ຽງທີ່ກ່ຽວຂ້ອງກັບການຖ່າຍທອດສົດການທາລຸນທາງເພດເດັກແນວໃດ;
- ຈົ່ງສົ່ງເສີມໃຫ້ມີຂອບກົດໝາຍທີ່ເຂັ້ມແຂງຂຶ້ນ ທີ່ກຳນົດວ່າການຖ່າຍທອດສົດກ່ຽວກັບການທາລຸນທາງເພດ ຫຼື ການກະທຳລາມົກອະນາຈານເດັກແມ່ນການກະທຳຜິດທາງອາຍາ;
- ຈົ່ງສົ່ງເສີມໃຫ້ມີແຫຼ່ງຊັບພະຍາກອນທີ່ດີຂຶ້ນສຳລັບການບັງຄັບໃຊ້ກົດໝາຍເພື່ອຮັບມືກັບບັນຫາດັ່ງກ່າວ;
- ຈົ່ງສົ່ງເສີມ ແລະ ຮ່ວມມືກັບສະຖາບັນການເງິນເພື່ອຄົ້ນຫາ ແລະ ຕິດຕາມທຸລະກຳທີ່ໜ້າສົງໄສ ທີ່ອາດຈະກ່ຽວຂ້ອງກັບອາດຊະຍາກຳ.

ເອກະສານຂໍ້ມູນຕົວຈິງທີ່ຊີ້ໃຫ້ເຫັນກ່ຽວກັບການຂູດຮີດທາງເພດເດັກທາງອິນເຕີເນັດ ສະບັບນີ້ໄດ້ຮັບການພັດທະນາໂດຍອົງການ ECPAT ສາກົນ.
ສະໜັບສະໜູນການແປພາສາ ແລະ ການຜະລິດໂດຍອົງການສປຊ ສຳລັບເດັກ